AGING AND LONG-TERM SUPPORT ADMINISTRATION
PO BOX 45600
OLYMPIA WA 98504-5600

# ພະແນກປ້ອງກັນຜູ້ໃຫຍ່: ສິດທິຂອງທ່ານ

**Adult Protective Services: Your Rights**

ທ່ານໄດ້ຮັບສິດທີ່ຈະເປັນອິສຣະຈາກການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ແລະ ການປ່ອຍປະລະເລີຍ. ຖ້າມັນມີເຫດຜົນທີ່ຈະເຊື່ອວ່າທ່ານໄດ້ປະສົບພົບພໍກັບການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ຫລືການປ່ອຍປະລະເລີຍ, ທ່ານມີສິດທີ່ຈະ:

1. ເຮັດການລາຍງານໄປຫາກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS) ແລະ ເຈົ້າໜ້າທີ່ຕໍາຣວດ ແລະ ແລກປ່ຽນຣາຍຣະອຽດຕ່າງໆນໍາກັນທີ່ທ່ານເຊື່ອວ່າສາມາດກ່ຽວກັນກັບການສືບສວນ, ແລະ ຊີ້ຕົວທຸກໆຄົນທີ່ທ່ານເຊື່ອວ່າອາດຈະມີຣາຍຣະອຽດສໍາຄັນທີ່ກ່ຽວກັນກັບກໍຣະນີ.
2. ເປັນອິສຣະຈາກການແກ້ແຄ້ນສໍາລັບການລາຍງານ ຫລື ການເຮັດໃຫ້ມີການລາຍງານກ່ຽວກັບການປະຖິ້ມ,ການກົດຂີ່ຂົ່ມເຫັງ,ການສວຍໂອກາດດ້ານການເງິນ,ຫລືການປ່ອຍປະລະເລີຍ.
3. ຖືກປະຕິບັດນໍາດ້ວຍກຽດ ແລະເວົ້ານໍາດ້ວຍພາສາທີ່ນ່ານັບຖື.
4. ການອໍານວຍຄວາມສະດວກທີ່ເໝາະສົມສໍາລັບຄວາມເສັຽອົງຄະຂອງທ່ານເມື່ອເວລາລາຍງານ, ແລະ ໃນຣະຫວ່າງການສືບສວນ ແລະ ການດໍາເນີນການທາງການປົກຄອງ.
5. ຮ້ອງຂໍເອົາຄໍາສັ່ງທີ່ຫວງຫ້າມຄົນໃດຄົນນຶ່ງຜູ້ທີ່ໄດ້ປະຖິ້ມ,ກົດຂີ່ຂົ່ມເຫັງ,ສວຍໂອກາດດ້ານການເງິນຫລືປ່ອຍປະລະເລີຍທ່ານຈາກການຍັງຢູ່ໃນເຮືອນຂອງທ່ານ,ການມີການຕິດຕໍ່ນໍາທ່ານ,ຫລືການເຂົ້າເຖິງເງິນຫລືຊັບສິນຂອງທ່ານ.
6. ຮັບເອົາຈາກກົມ DSHS ຣາຍຣະອຽດ ແລະ ການສົ່ງຕໍ່ທີ່ເໝາະສົມໄປຫາຫ້ອງການອື່ນທີ່ສາມາດສະນັບສະນູນ, ສືບສວນ, ຫລື ດໍາເນີນການ.
7. ຖືກແຈ້ງບອກກ່ຽວກັບສະພາບຂອງການສືບສວນ, ການດໍາເນີນການ, ການກະທໍາຂອງສານ, ແລະ ຜົນອອກມາໂດຍຫ້ອງການທີ່ກໍາສໍານວນເອກສານຕ່າງໆຊຶ່ງໃນນັ້ນທ່ານເປັນຜູ້ເຄາະຮ້າຍ.
8. ຮ້ອງຂໍເອົາການສົ່ງຕໍ່ໄປເອົາການສະນັບສະນູນ ຫລື ການຊ່ວຍເຫລືອທາງກົດໝາຍເພື່ອຈະຊ່ວຍເຫລືອນໍາການວາງແຜນເຣື່ອງຄວາມປອດພັຍ, ການສືບສວນ, ແລະ ການຟັງເຣື່ອງ.
9. ຮ້ອງທຸກຫາກົມ DSHS ຢ່າງເປັນທາງການ ຫລື ບໍ່ເປັນທາງການ, ກ່ຽວກັບການສືບສວນ ຫລື ການດໍາເນີນການ, ແລະໄດ້ຮັບຄໍາຕອບໂດຍທັນທີໂລດ.

**ເພື່ອຈະລາຍງານການກົດຂີ່ຂົ່ມເຫັງ, ການປະຖິ້ມ, ການປ່ອຍປະລະເລີຍ, ການປ່ອຍປະລະເລີຍຕົນເອງ ຫລື ການສວຍໂອກາດທາງການເງິນ, ຫລື ເພື່ອຈະສອບຖາມເອົາຣາຍຣະອຽດ, ໃຫ້ໂທຫາ:**

**Centralized Intake Voice/TTY ເຂົ້າຫາໄດ້ 1-877-734-6277 / TTY 1-833-866-5595**

**1-866-EndHarm (1-866-363-4276)**

ຣາຍຣະອຽດການຕິດຕໍ່ທ້ອງຖິ່ນ: